**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2315 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 16 ກໍລະກົດ 2026

# ຂໍ້ຕົກລົງ
# ວ່າດ້ວຍການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່

- ອີງຕາມ ດຳລັດ ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 559/ລບ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມການຄ້າພາຍໃນ ສະບັບເລກທີ 0994/ກຄພນ.05, ລົງວັນທີ 10 ມິຖຸນາ 2026.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບວຽກງານຄຸ້ມຄອງການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ, ແນໃສ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່**

ການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ແມ່ນ ຮູບແບບໜຶ່ງຂອງການສະໜອງນ້ຳມັນເຊື້ອໄຟ ທີ່ດຳເນີນການໂດຍບໍລິສັດ ນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ຫຼື ບໍລິສັດ ຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ດ້ວຍການນຳໃຊ້ລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່ ໃຫ້ແກ່ລູກຄ້າ ຢູ່ສະຖານທີ່ ຫຼື ເປົ້າໝາຍທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ນ້ຳມັນເຊື້ອໄຟ** ໝາຍເຖິງ ຜະລິດຕະພັນນ້ຳມັນປະເພດ ນ້ຳມັນແອັດຊັງ, ນ້ຳມັນກາຊວນ ຫຼື ນ້ຳມັນເຊື້ອໄຟຊີວະພາບ ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ ໃນແຕ່ລະໄລຍະ;

2. **ລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່** ໝາຍເຖິງ ພາຫະນະສະເພາະສຳລັບຂົນສົ່ງສິນຄ້າອັນຕະລາຍ ທີ່ໄດ້ຮັບການຕິດຕັ້ງຖັງບັນຈຸ, ຫົວຈ່າຍ, ລະບົບປ້ອງກັນອັກຄີໄພ, ເຄື່ອງໝາຍການຄ້າຂອງບໍລິສັດ ແລະ ປ້າຍສັນຍາລັກເຕືອນໄພສິນຄ້າອັນຕະລາຍ ຕາມມາດຕະຖານເຕັກນິກທີ່ກຳນົດ;

3. **ລູກຄ້າ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ໂຄງການ ຫຼື ການຈັດຕັ້ງ ທີ່ຊື້ນ້ຳມັນເຊື້ອໄຟ ຈາກບໍລິສັດທີ່ໄດ້ຮັບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;

4. **ສະຖານທີ່ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່** ໝາຍເຖິງ ພື້ນສະເພາະທີ່ໄດ້ຮັບອະນຸຍາດຈາກຂະແໜງອຸດສາຫະກຳ ແລະ ການຄ້າ ຊຶ່ງຕ້ອງບໍ່ຢູ່ບ່ອນຊຸມຊົນ, ຕາມແຄມທາງສັນຈອນ, ໃນອາຄານທີ່ຢູ່ອາໄສ, ໂຮງຈອດລົດແບບປິດ ຫຼື ພື້ນທີ່ມີຄວາມສ່ຽງຕໍ່ການເກີດອັກຄີໄພ, ສະຖານທີ່ດັ່ງກ່າວ ຕ້ອງມີຄວາມປອດໄພ, ລະບາຍອາກາດໄດ້ດີ ແລະ ຫ່າງຈາກແຫຼ່ງກໍ່ໃຫ້ເກີດປະກາຍໄຟ, ແຫຼ່ງຄວາມຮ້ອນ ຫຼື ວັດຖຸໄວໄຟ ຢ່າງໜ້ອຍລັດສະໝີ ສາມສິບແມັດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບໍລິສັດ ນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ແລະ ບໍລິສັດ ຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຢູ່ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່

**ມາດຕາ 5 ເງື່ອນໄຂການດຳເນີນການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່**

ການຂໍອະນຸຍາດດຳເນີນການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໃບອະນຸຍາດດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ຫຼື ຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ;
2. ລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່ ຕາມມາດຕະຖານເຕັກນິກ ສິບຄັນ ຂຶ້ນໄປ;
3. ລະບົບຕິດຕາມລົດ (GPS) ແລະ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກການຈຳໜ່າຍ ທີ່ສາມາດເຊື່ອມຕໍ່ກັບລະບົບຂອງກະຊວງອຸດສາຫະກຳ ແລະ ການຄ້າ;
4. ສັນຍາຊື້-ຂາຍນ້ຳມັນເຊື້ອໄຟ ກັບລູກຄ້າ;
5. ສະຖານທີ່ເກັບຮັກສາລົດ ຫຼື ຈຸດຈອດພັກລົດ ທີ່ໄດ້ມາດຕະຖານຄວາມປອດໄພ ຕາມການກຳນົດຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 6 ເງື່ອນໄຂຂອງສະຖານທີ່ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່**

ສະຖານທີ່ການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ເປັນພື້ນທີ່ທີ່ມີຄວາມໝັ້ນຄົງ, ມີການລະບາຍອາກາດໄດ້ດີ, ຫ່າງໄກຈາກແຫຼ່ງກໍ່ໃຫ້ເກີດປະກາຍໄຟ, ແຫຼ່ງຄວາມຮ້ອນ ຫຼື ວັດຖຸໄວໄຟ ຢ່າງໜ້ອຍ ສາມສິບແມັດ;
2. ບໍ່ແມ່ນເຂດຊຸມຊົນ, ບໍ່ຢູ່ຕາມແຄມທາງສັນຈອນສາທາລະນະ, ບໍ່ຢູ່ໃນອາຄານທີ່ຢູ່ອາໄສ ຫຼື ໂຮງຈອດລົດແບບປິດ;
3. ກຳນົດຂອບເຂດສະຖານທີ່ໃຫ້ຈະແຈ້ງ, ມີປ້າຍເຕືອນໄພຫ້າມສູບຢາ ແລະ ເຂດອັນຕະລາຍ ຕິດໄວ້ໃນຈຸດທີ່ເຫັນໄດ້ງ່າຍ;
4. ມີອຸປະກອນປ້ອງກັນ ແລະ ສະກັດກັ້ນອັກຄີໄພ (ຖັງດັບເພີງ) ທີ່ໄດ້ມາດຕະຖານ ປະຈຳໄວ້ຢູ່ຈຸດຈຳໜ່າຍ ໃນຈຳນວນທີ່ພຽງພໍ;
5. ມີລະບົບປ້ອງກັນການຮົ່ວໄຫຼຂອງນ້ຳມັນລົງສູ່ດິນ ຫຼື ແຫຼ່ງນ້ຳ ຕາມມາດຕະຖານການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 7 ການຂໍອະນຸຍາດດຳເນີນການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່**

ບໍລິສັດ ນຳເຂົ້າ-ສົ່ງອອກນ້ຳມັນເຊື້ອໄຟ ຫຼື ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ທີ່ມີຈຸດປະສົງດຳເນີນການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃຫ້ຍື່ນຄຳຮ້ອງຕໍ່ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ, ຊຶ່ງຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຫຼື ຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ;
4. ສຳເນົາໃບຢັ້ງຢືນດ້ານມາດຕະຖານເຕັກນິກ ແລະ ຄວາມປອດໄພ ຂອງລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່;
5. ສຳເນົາໃບຢັ້ງຢືນມາດຕະຖານປ້ອງກັນອັກຄີໄພຂອງລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່;
6. ສຳເນົາໃບຢັ້ງຢືນມາດຕະຖານເຕັກນິກຫົວຈ່າຍ ແລະ ອຸປະກອນວັດແທກ ຂອງລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່;
7. ສຳເນົາເອກະສານຢັ້ງຢືນການຕິດຕັ້ງລະບົບຕິດຕາມລົດຂົນສົ່ງ (GPS) ແລະ ລະບົບການຄຸ້ມຄອງ, ຕິດຕາມ ແລະ ກວດນັບຕົວເລກການຈຳໜ່າຍ ທີ່ສາມາດເຊື່ອມຕໍ່ກັບລະບົບຂອງກະຊວງອຸດສາຫະກຳ ແລະ ການຄ້າ;
8. ສັນຍາຊື້-ຂາຍນ້ຳມັນເຊື້ອໄຟກັບວິສາຫະກິດ ຫຼື ໂຄງການ ທີ່ລະບຸສະຖານທີ່ ແລະ ໄລຍະເວລາການບໍລິການຢ່າງຊັດເຈນ.

**ມາດຕາ 8 ການພິຈາລະນາ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງແລ້ວ, ກົມການຄ້າພາຍໃນ ຕ້ອງພິຈາລະນາອອກໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ພາຍໃນ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

ກໍລະນີເອກະສານບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງ ໃຫ້ແຈ້ງຜູ້ຍື່ນຄຳຮ້ອງຊາບ ພາຍໃນ ຫ້າວັນລັດຖະການນັບແຕ່ວັນທີໄດ້ຮັບເອກະສານເປັນຕົ້ນໄປ ເພື່ອປັບປຸງແກ້ໄຂ.

ກໍລະນີບໍ່ສາມາດອອກໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຍື່ນຄຳຮ້ອງຊາບ ພາຍໃນ ຫ້າວັນລັດຖະການ ນັບແຕ່ວັນທີໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 9 ອາຍຸໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່**

ໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ມີອາຍຸນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

ການສະເໜີຂໍຕໍ່ອາຍຸໃບອະນຸຍາດອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃຫ້ຍື່ນຄຳຮ້ອງຕໍ່ກົມການຄ້າພາຍໃນ ຢ່າງໜ້ອຍ ສາມສິບວັນ ກ່ອນວັນໝົດອາຍຸນຳໃຊ້, ຊຶ່ງຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຫຼື ຈຳໜ່າຍນ້ຳມັນເຊື້ອໄຟພາຍໃນ ທີ່ຍັງມີອາຍຸການນຳໃຊ້;
3. ສຳເນົາໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
4. ໃບຢັ້ງຢືນການຝຶກອົບຮົມ ແລະ ໄດ້ຮັບການຢັ້ງຢືນທາງດ້ານຄວາມປອດໄພດ້ານອັກຄີໄພ ຂອງພະນັກງານໃຫ້ບໍລິການ;
5. ສະຫຼຸບການຈຳໜ່າຍນ້ຳມັນເຊື້ອໄຟເຄື່ອນທີ່ ແຕ່ວັນໄດ້ຮັບອະນຸຍາດຈົນຮອດວັນຂໍຕໍ່ອາຍຸນຳໃຊ້.

**ມາດຕາ 10 ການແຈ້ງ ແລະ ການປ່ຽນແປງສະຖານທີ່**

ການແຈ້ງ ແລະ ປ່ຽນສະຖານທີ່ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຕ້ອງປະຕິບັດ ດັ່ງນີ້:

1. ຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຕ້ອງແຈ້ງສະຖານທີ່ ຫຼື ໂຄງການທີ່ຈະໄປດຳເນີນການຈຳໜ່າຍ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນລາຍລັກອັກສອນ ຢ່າງໜ້ອຍສາມວັນລັດຖະການ ກ່ອນເລີ່ມດຳເນີນການຈຳໜ່າຍນ້ຳມັນເຊື້ອໄຟ;

2. ກໍລະນີມີຄວາມຈຳເປັນຕ້ອງປ່ຽນແປງ ຫຼື ຍົກຍ້າຍສະຖານທີ່ຈຳໜ່າຍ, ຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຕ້ອງແຈ້ງຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອຂໍອະນຸຍາດເປັນລາຍລັກອັກສອນ ຢ່າງໜ້ອຍ ຫ້າວັນລັດຖະການ ກ່ອນການປ່ຽນແປງ ຫຼື ຍົກຍ້າຍສະຖານທີ່ຈຳໜ່າຍ;

3. ການແຈ້ງ ຫຼື ຂໍອະນຸຍາດປ່ຽນແປງສະຖານທີ່ ຕ້ອງປະກອບດ້ວຍເອກະສານຢັ້ງຢືນຄວາມພ້ອມດ້ານຄວາມປອດໄພຂອງສະຖານທີ່ໃໝ່ ແລະ ສັນຍາຊື້-ຂາຍນ້ຳມັນເຊື້ອໄຟກັບລູກຄ້າ ຫຼື ໂຄງການ ທີ່ລະບຸສະຖານທີ່ດັ່ງກ່າວຢ່າງຈະແຈ້ງ;

4. ຫ້າມບໍ່ໃຫ້ມີການເຄື່ອນຍ້າຍລົດຈຳໜ່າຍນ້ຳມັນເຊື້ອແບບເຄື່ອນທີ່ ໄປໃນສະຖານທີ່ອື່ນ ໂດຍບໍ່ໄດ້ແຈ້ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງຊາບ.

## ໝວດທີ 3
## ການໂຈະ ແລະ ການຍົກເລີກ
## ໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່

**ມາດຕາ 11 ການໂຈະໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່**

ໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຈະຖືກໂຈະ ກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີໂຈະດ້ວຍຄວາມສະໝັກໃຈຂອງຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;

2. ດຳເນີນທຸລະກິດບໍ່ຖືກຕ້ອງຕາມເງື່ອນໄຂ, ຈຸດປະສົງ ແລະ ເປົ້າໝາຍທີ່ໄດ້ຮັບອະນຸຍາດ;

3. ໂຈະພາຍຫຼັງທີ່ໄດ້ກ່າວເຕືອນເປັນລາຍລັກອັກສອນ ຊຶ່ງຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງພາຍຫຼັງຖືກກ່າວເຕືອນ ພາຍໃນ ສາມເດືອນ ນັບແຕ່ວັນທີໄດ້ກ່າວເຕືອນເປັນຕົ້ນໄປ.

**ມາດຕາ 12 ການໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່**

ໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຈະຖືກຍົກເລີກ ກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີຂໍຍົກເລີກດ້ວຍຄວາມສະໝັກໃຈຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;

2. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງພາຍຫຼັງທີ່ຖືກສັ່ງໂຈະ ພາຍໃນ ສາມເດືອນ ນັບແຕ່ວັນທີຖືກໂຈະເປັນຕົ້ນໄປ;

3. ມີການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຢ່າງຮ້າຍແຮງ;

4. ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຍຸບເລີກ ຫຼື ໃຫ້ລົ້ມລະລາຍ ຂອງວິສາຫະກິດ.

ພາຍຫຼັງຍົກເລີກໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ແລ້ວ ກົມການຄ້າພາຍໃນຕ້ອງແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງຊາບ ພາຍໃນ ຫ້າວັນລັດຖະການ ນັບແຕ່ວັນທີຍົກເລີກໃບອະນຸຍາດດັ່ງກ່າວເປັນຕົ້ນໄປ.

## ໝວດທີ 4
## ສິດ ແລະ ພັນທະ ຂອງຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່

**ມາດຕາ 13 ສິດ ຂອງຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່**

ຜູ້ດຳເນີນການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ມີສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດຕໍ່ຊັບສິນໃນການດຳເນີນທຸລະກິດ;

2. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;

3. ຈຳໜ່າຍນ້ຳມັນເຊື້ອໄຟທີ່ຮັບອອກຈາກສາງນ້ຳມັນເຊື້ອໄຟຂອງບໍລິສັດຂອງຕົນ ຫຼື ສາງຂອງບໍລິສັດອື່ນຕາມການອະນຸຍາດຂອງກົມການຄ້າພາຍໃນ ໃຫ້ແກ່ລູກຄ້າຢູ່ສະຖານທີ່ ທີ່ໄດ້ຮັບອະນຸຍາດ;

4. ປະຕິເສດການຈຳໜ່າຍນ້ຳມັນເຊື້ອໄຟ ກໍລະນີພົບເຫັນສະຖານທີ່ຈຳໜ່າຍຂອງລູກຄ້າບໍ່ໄດ້ມາດຕະຖານ ຫຼື ມີຄວາມສ່ຽງທີ່ອາດຈະກໍ່ໃຫ້ເກີດອັກຄີໄພ ແລະ ຄວາມບໍ່ປອດໄພ;

5. ໄດ້ຮັບການສົ່ງເສີມ ແລະ ການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ເຕັກໂນໂລຊີ;

6. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 14 ພັນທະ ຂອງຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່**

ຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ມີພັນທະ ດັ່ງນີ້:

1. ດຳເນີນທຸລະກິດ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ;
2. ຖືບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;
3. ເສຍພັນທະພາສີ, ອາກອນ ແລະ ພັນທະອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ;
4. ປະຕິບັດລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ແກ່ລູກຄ້າທີ່ເປັນບຸກຄົນ ຫຼື ການຈັດຕັ້ງ ຕາມໂຄງປະກອບລາຄາ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດໃນແຕ່ລະໄລຍະ;
5. ຮັບປະກັນທາງດ້ານຄຸນນະພາບ ແລະ ປະລິມານນ້ຳມັນເຊື້ອໄຟທີ່ຕົນຈຳໜ່າຍ;
6. ແຈ້ງສະຖານທີ່ການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນທີ່ຕົນຈຳໜ່າຍ;
7. ຈຳໜ່າຍນ້ຳມັນເຊື້ອໄຟ ຢູ່ສະຖານທີ່ ທີ່ໄດ້ຮັບອະນຸຍາດ;
8. ລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່ ຕ້ອງຜ່ານການກວດກາ ແລະ ການຢັ້ງຢືນມາດຕະຖານເຕັກນິກ ດັ່ງນີ້:
    1) ຜ່ານການກວດກາ ແລະ ການຢັ້ງຢືນມາດຕະຖານເຕັກນິກລົດ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ;
    2) ຖັງບັນຈຸ ແລະ ຫົວຈ່າຍ ໄດ້ຮັບການຢັ້ງຢືນຈາກຂະແໜງມາດຕະຖານ ແລະ ວັດແທກ;
    3) ລະບົບປ້ອງກັນອັກຄີໄພ ໄດ້ຮັບການຢັ້ງຢືນຈາກຂະແໜງປ້ອງກັນຄວາມສະຫງົບ;
    4) ຕິດຕັ້ງລະບົບຕິດຕາມລົດແບບເຄື່ອນທີ່ (GPS) ທີ່ສາມາດເຊື່ອມຕໍ່ກັບລະບົບຂອງກະຊວງອຸດສາຫະກຳ ແລະ ການຄ້າ.
9. ຕິດເຄື່ອງໝາຍລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່ຂອງບໍລິສັດໃຫ້ຈະແຈ້ງ;
10. ພະນັກງານຂັບລົດທີ່ມີໃບອະນຸຍາດຂັບຂີ່ ຖືກຕ້ອງຕາມລະບຽບການຂອງຂະແໜງໂຍທາທິການ ແລະ ຂົນສົ່ງ;
11. ພະນັກງານຂັບລົດ ແລະ ພະນັກງານທີ່ກ່ຽວຂ້ອງໃນການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຕ້ອງໄດ້ຮັບການຝຶກອົບຮົມສະເພາະດ້ານ ດັ່ງນີ້:
    1) ຂັ້ນຕອນການຈັດການນ້ຳມັນເຊື້ອໄຟທີ່ປອດໄພ;
    2) ການຕອບໂຕ້ເຫດສຸກເສີນ, ການຄວບຄຸມການຮົ່ວໄຫຼ ແລະ ການຄວບຄຸມອັກຄີໄພ;
    3) ປະຕິບັດການ ແລະ ບຳລຸງຮັກສາອຸປະກອນການຈຳໜ່າຍນ້ຳມັນເຊື້ອໄຟ.
12. ອຸປະກອນ, ລະບົບປ້ອງກັນອັກຄີໄພ ແລະ ເຄື່ອງສັນຍານເຕືອນໄພ ໃນເວລາໃຫ້ບໍລິການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ທີ່ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ;
13. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
14. ສະຫຼຸບ ແລະ ລາຍງານກ່ຽວກັບການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃຫ້ກົມການຄ້າພາຍໃນ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ທີ່ຕົນໃຫ້ບໍລິການຈຳໜ່າຍ ຢ່າງເປັນປົກກະຕິ;
15. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 15 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີພຶດຕິກຳ ດັ່ງນີ້:

1. ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສ້າງອຸປະສັກ, ຂັດຂວາງ, ໃຊ້ຄວາມຮຸນແຮງ, ບັງຂັບ, ນາບຂູ່ ຫຼື ໝິ່ນປະໝາດ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ປອມແປງເອກະສານ ກ່ຽວກັບການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;

4. ປົດບັງຂໍ້ມູນຄວາມຈິງ, ລາຍງານຕົວເລກບໍ່ຖືກຕ້ອງ ຫຼື ບໍ່ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ໃນການກວດກາ;

5. ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 16 ຂໍ້ຫ້າມສຳລັບ ຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່**

ຫ້າມຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ມີພຶດຕິກຳ ດັ່ງນີ້:

1. ເອົາໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້;

2. ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໂດຍບໍ່ຖືກຕ້ອງຕາມລາຄາທີ່ລັດກຳນົດ;

3. ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃນສະຖານທີ່ ທີ່ບໍ່ໄດ້ຮັບອະນຸຍາດ;

4. ບໍ່ເສຍພັນທະພາສີ, ອາກອນ ຫຼື ພັນທະການເງິນອື່ນບໍ່ຄົບຖ້ວນ;

5. ຈຳໜ່າຍນ້ຳມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ, ບໍ່ເຕັມບໍລິມາດ ຫຼື ບໍ່ຜ່ານຫົວຈ່າຍທີ່ໄດ້ຮັບການຢັ້ງຢືນມາດຕະຖານ;

6. ຊື້ນ້ຳມັນເຊື້ອໄຟ ຈາກບຸກຄົນ ແລະ ນິຕິບຸກຄົນອື່ນ;

7. ດັດແປງຫົວຈ່າຍ, ລະບົບວັດແທກ ຫຼື ລະບົບຄວບຄຸມຕົວເລກຈຳໜ່າຍ ເພື່ອເອົາປຽບລູກຄ້າ;

8. ນຳໃຊ້ລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່ ທີ່ບໍ່ຜ່ານການກວດກາ ແລະ ການຢັ້ງຢືນມາດຕະຖານເຕັກນິກ;

9. ກັກຕຸນນ້ຳມັນເຊື້ອໄຟ ເພື່ອເກັງກຳໄລ ຫຼື ສ້າງຄວາມປັ່ນປ່ວນໃນຕະຫຼາດ;

10. ຈຳໜ່າຍນ້ຳມັນເຊື້ອໄຟ ທີ່ຜ່ານຂະບວນການປຸງແຕ່ງພາຍໃນ ໃຫ້ໂຮງງານປຸງແຕ່ງນ້ຳມັນເຊື້ອໄຟເພື່ອປຸງແຕ່ງນ້ຳມັນເຊື້ອໄຟ ຄືນໃໝ່;

11. ນຳເຂົ້ານ້ຳມັນເຊື້ອໄຟດ້ວຍຕົນເອງ ສຳລັບບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟ ພາຍໃນ ທີ່ໄດ້ຮັບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 17 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ, ສິດອຳນາດ ເພື່ອຜົນປະໂຫຍດສ່ວນຕົວ, ຍາດພີ່ນ້ອງ ຫຼື ພັກພວກຂອງຕົນ;

2. ກົດໜ່ວງ, ຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ ໂດຍບໍ່ມີເຫດຜົນອັນຄວນ;

3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງຜູ້ປະກອບການທຸລະກິດ ຫຼື ຂໍ້ມູນຄວາມລັບທາງການຄ້າ ໂດຍບໍ່ໄດ້ຮັບອະນຸຍາດ;

4. ອອກໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່, ໃບຢັ້ງຢືນມາດຕະຖານ ຫຼື ໃບອະນຸຍາດອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

5. ຮຽກເອົາ, ທວງເອົາ ຫຼື ຮັບເອົາສິນບົນ ຫຼື ຜົນປະໂຫຍດອື່ນໆ ຈາກຜູ້ປະກອບການ;

6. ເປັນນາຍໜ້າ, ທີ່ປຶກສາ ຫຼື ມີສ່ວນຮ່ວມໃນການບໍລິຫານງານ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;

7. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ເພື່ອຜົນປະໂຫຍດໃນການຄຸ້ມຄອງທຸລະກິດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່

### ມາດຕາ 18 ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າປະກອບ ແບ່ງອອກເປັນ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມການຄ້າພາຍໃນ;
2. ຂັ້ນແຂວງ, ນະຄອນຫຼວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

### ມາດຕາ 19 ສິດ ແລະ ໜ້າທີ່ ຂອງກົມການຄ້າພາຍໃນ

ກົມກົມການຄ້າພາຍໃນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
3. ພິຈາລະນາອອກ, ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
4. ປະສານສົມທົບກັບຂະແໜງກ່ຽວຂ້ອງ ກ່ຽວກັບວຽກງານຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
5. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ແລະ ຜູ້ຊົມໃຊ້;
6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃຫ້ຂັ້ນເທິງຮັບຊາບ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 20 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ

1. ເຜີຍແຜ່, ແນະນຳຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;
2. ປະສານສົມທົບຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕິດຕາມ ກວດກາ ການປະຕິບັດລາຄານ້ຳມັນເຊື້ອໄຟ ເປັນແຕ່ລະໄລຍະ;
3. ປະສານສົມທົບກັບຂະແໜງກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
4. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງຜູ້ຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ແລະ ຜູ້ຊົມໃຊ້;

5. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານ ຕິດຕາມ ກວດກາ ການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃຫ້ກົມການຄ້າພາຍໃນ ເປັນປະຈຳ ທຸກເດືອນ ແລະ ປີ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

1. ເຜີຍແຜ່, ແນະນຳຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

2. ປະສານພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມ ກວດກາ ການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃນຂອບເຂດເມືອງ, ນະຄອນ ຂອງຕົນ;

3. ກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ໃຊ້ມາດຕະການຕໍ່ຜູ້ລະເມີດ;

4. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານ ຕິດຕາມ ກວດກາ ການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນປະຈຳ ທຸກເດືອນ ແລະ ປີ ຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ມາດຕະການປັບໃໝ, ການຄຸ້ມຄອງ ແລະ ນຳໃຊ້ເງິນປັບໃໝ

**ມາດຕາ 22 ມາດຕະການປັບໃໝ**

ຜູ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ເອົາໃບອະນຸຍາດດຳເນີນ ໃຫ້ບຸກຄົນອື່ນນຳໃຊ້ ຈະນຳໃຊ້ມາດຕະການ ດັ່ງນີ້:
   1) ຄັ້ງທີໜຶ່ງ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່ານ້ຳມັນເຊື້ອໄຟທີ່ກວດພົບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
   2) ຄັ້ງທີສອງ ຈະຖືກປັບໃໝ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່ານ້ຳມັນເຊື້ອໄຟ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
   3) ຄັ້ງທີສາມ ຈະຖືກປັບໃໝ ໜຶ່ງຮ້ອຍຫ້າສິບ (150%) ຂອງມູນຄ່ານ້ຳມັນເຊື້ອໄຟ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

2. ຈຳໜ່າຍນ້ຳມັນເຊື້ອໄຟ ທີ່ຜ່ານຂະບວນການປຸງແຕ່ງພາຍໃນ ໃຫ້ໂຮງງານປຸງແຕ່ງນ້ຳມັນເຊື້ອໄຟ ເພື່ອປຸງແຕ່ງນ້ຳມັນເຊື້ອໄຟ ຄືນໃໝ່ ຈະນຳໃຊ້ມາດຕະການ ດັ່ງນີ້:
   1) ຄັ້ງທີໜຶ່ງ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (30%) ຂອງມູນຄ່ານ້ຳມັນເຊື້ອໄຟທີ່ກວດພົບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
   2) ຄັ້ງທີສອງ ຈະຖືກປັບໃໝ ໜຶ່ງຮ້ອຍສ່ວນຮ້ອຍ (60%) ຂອງມູນຄ່ານ້ຳມັນເຊື້ອໄຟ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
   3) ຄັ້ງທີສາມ ຈະຖືກປັບໃໝ ໜຶ່ງຮ້ອຍຫ້າສິບ (100%) ຂອງມູນຄ່ານ້ຳມັນເຊື້ອໄຟ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

3. ນໍາເຂົ້ານໍ້າມັນເຊື້ອໄຟດ້ວຍຕົນເອງ ສໍາລັບບໍລິສັດຈໍາໜ່າຍນໍ້າມັນເຊື້ອໄຟ ພາຍໃນ ທີ່ໄດ້ຮັບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຈະຖືກນໍາໃຊ້ມາດຕະການ ດັ່ງນີ້:

1) ຄັ້ງທີໜຶ່ງ ຈະຖືກປັບໃໝ 50,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
2) ຄັ້ງທີສອງ ຈະຖືກປັບໃໝ 100,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
3) ຄັ້ງທີສາມ ຈະຖືກປັບໃໝ 150,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

4. ຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ໄປຈໍາໜ່າຍໃນສະຖານທີ່ບໍ່ໄດ້ຮັບອະນຸຍາດ ຈະຖືກນໍາໃຊ້ມາດຕະການ ດັ່ງນີ້:

1) ຄັ້ງທີໜຶ່ງ ຈະຖືກປັບໃໝ 30,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
2) ຄັ້ງທີສອງ ຈະຖືກປັບໃໝ 45,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
3) ຄັ້ງທີສາມ ຈະຖືກປັບໃໝ 60,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

5. ຈໍາໜ່າຍນໍ້າມັນເຊື້ອໄຟທີ່ບໍ່ໄດ້ມາດຕະຖານແຫ່ງຊາດ, ບໍ່ເຕັມບໍລິມາດຫຼື ບໍ່ຜ່ານຫົວຈ່າຍທີ່ໄດ້ຮັບການຢັ້ງຢືນມາດຕະຖານ ຈະຖືກນໍາໃຊ້ມາດຕະການ ດັ່ງນີ້:

1) ຄັ້ງທີໜຶ່ງ ຈະຖືກປັບໃໝ 20,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
2) ຄັ້ງທີສອງ ຈະຖືກປັບໃໝ 40,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
3) ຄັ້ງທີສາມ ຈະຖືກປັບໃໝ 60,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

6. ຊື້ນໍ້າມັນເຊື້ອໄຟ ຈາກບຸກຄົນ ແລະ ນິຕິບຸກຄົນອື່ນ ຈະຖືກນໍາໃຊ້ມາດຕະການ ດັ່ງນີ້:

1) ຄັ້ງທີໜຶ່ງ ຈະຖືກປັບໃໝ 20,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
2) ຄັ້ງທີສອງ ຈະຖືກປັບໃໝ 40,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
3) ຄັ້ງທີສາມ ຈະຖືກປັບໃໝ 60,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

7. ຈໍາໜ່າຍນໍ້າມັນເຊື້ອໄຟ ໂດຍບໍ່ຜ່ານຫົວຈ່າຍນໍ້າມັນເຊື້ອໄຟ ຈະຖືກນໍາໃຊ້ມາດຕະການ ດັ່ງນີ້:

1) ຄັ້ງທີໜຶ່ງ ຈະຖືກປັບໃໝ 30,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
2) ຄັ້ງທີສອງ ຈະຖືກປັບໃໝ 60,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
3) ຄັ້ງທີສາມ ຈະຖືກປັບໃໝ 90,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈໍາໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

8. ຈຳໜ່າຍນ້ຳມັນເຊື້ອໄຟ ໂດຍບໍ່ຖືກຕ້ອງຕາມລາຄານ້ຳມັນເຊື້ອໄຟ ທີ່ລັດກຳນົດ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:

1) ຄັ້ງທີໜຶ່ງ ຈະຖືກປັບໃໝ 20,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
2) ຄັ້ງທີສອງ ຈະຖືກປັບໃໝ 30,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
3) ຄັ້ງທີສາມ ຈະຖືກປັບໃໝ 45,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

9. ນຳໃຊ້ລົດຈຳໜ່າຍນ້ຳມັນເຊື້ອໄຟແບບເຄື່ອນທີ່ ທີ່ບໍ່ຜ່ານການກວດກາ ແລະ ການຢັ້ງຢືນມາດຕະຖານເຕັກນິກ ຈະນຳໃຊ້ມາດຕະການ ດັ່ງນີ້:

1) ຄັ້ງທີໜຶ່ງ ຈະຖືກປັບໃໝ 20,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
2) ຄັ້ງທີສອງ ຈະຖືກປັບໃໝ 40,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
3) ຄັ້ງທີສາມ ຈະຖືກປັບໃໝ 60,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

10. ດັດແປງຫົວຈ່າຍ, ລະບົບອັດແທກ ຫຼື ລະບົບຄວບຄຸມຕົວເລກຈຳໜ່າຍ ເພື່ອເອົາປຽບລູກຄ້າ ຈະນຳໃຊ້ມາດຕະການ ດັ່ງນີ້:

1) ຄັ້ງທີໜຶ່ງ ຈະຖືກປັບໃໝ 20,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
2) ຄັ້ງທີສອງ ຈະຖືກປັບໃໝ 40,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
3) ຄັ້ງທີສາມ ຈະຖືກປັບໃໝ 60,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

11. ກັກຕຸນນ້ຳມັນເຊື້ອໄຟ ເພື່ອເກັງກຳໄລ ຫຼື ສ້າງຄວາມປັ່ນປ່ວນໃນຕະຫຼາດຈະຖືກປັບໃໝ ຈະນຳໃຊ້ມາດຕະການ ດັ່ງນີ້:

1) ຄັ້ງທີໜຶ່ງ ຈະຖືກປັບໃໝ 30,000,000 ກີບ ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ເຮັດບົດບັນທຶກ;
2) ຄັ້ງທີສອງ ຈະຖືກປັບໃໝ 50,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ໂຈະໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;
3) ຄັ້ງທີສາມ ຈະຖືກປັບໃໝ 100,000,000 ກີບ, ພ້ອມທັງຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ ແລະ ຍົກເລີກໃບອະນຸຍາດຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

**ມາດຕາ 23 ການຊຳລະເງິນປັບໃໝ**

ຜູ້ທີ່ລະເມີດລະບຽບການຈຳໜ່າຍນ້ຳມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່ ຕ້ອງຊຳລະເງິນປັບໃໝຕາມບົດບັນທຶກການລະເມີດ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍຊຳລະຜ່ານບັນຊີ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 24 ການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝຕາມຂໍ້ຕົກລົງສະບັບນີ້ ຫົກສິບສ່ວນຮ້ອຍ (60%) ມອບເຂົ້າງົບປະມານແຫ່ງລັດ ສ່ວນທີ່ເຫຼືອ ສີ່ສິບສ່ວນຮ້ອຍ (40%) ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ແລະ ຂຶ້ນແຜນການນຳໃຊ້ງົບປະມານຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງຂໍ້ຕົກລົງສະບັບນີ້.

ສຳລັບການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 25 ເປົ້າໝາຍການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ຈັດຝຶກອົບຮົມ, ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງຈຳໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;

2. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງການຈຳໜ່າຍນໍ້າມັນເຊື້ອໄຟດ້ວຍລົດເຄື່ອນທີ່ ລວມທັງວຽກງານອື່ນທີ່ຈຳເປັນ ແລະ ຮີບດ່ວນ;

3. ນຳໃຊ້ເຂົ້າວຽກງານບໍລິຫານ, ໂຄສະນາເຜີຍແຜ່ ນິຕິກຳ, ປຶ້ມຄູ່ມື, ຈັດຝຶກອົບຮົມ ດ້ານວິຊາການກ່ຽວກັບວຽກງານຄຸ້ມຄອງຈຳໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;

4. ການຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ເພື່ອຮັບໃຊ້ໃນການການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຈຳໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່;

5. ນຳໃຊ້ເຂົ້າໃນວຽກງານອື່ນ ກ່ຽວກັບວຽກງານຄຸ້ມຄອງຈຳໜ່າຍນໍ້າມັນເຊື້ອໄຟດ້ວຍລົດແບບເຄື່ອນທີ່.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 26 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າພາຍໃນ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 27 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ພຸດທະວັນ ນັນທະວົງ